**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 12 ເມສາ 2020 (4-12-2020)**

---

# ຄວາມຈິງຂອງການຄືນພຣະຊົນ

## *ເມື່ອໃດທີ່ທ່ານໄດ້ເປັນພະຍານເຣື່ອງທີ່ຕື່ນເຕັ້ນ?*

***ຈຸດສຳຄັນໃນບົດຮຽນ:*** *ການຄືນພຣະຊົນຂອງພຣະຄຣິດແມ່ນຂໍ້ມູນອັນນຶ່ງຂອງປະຫວັດສາດ.*

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ສຳລັບພວກເຮົາສ່ວນຫຼາຍ, ເລື້ອງລາວຂອງຂ່າວລະດັບປະເທດຫຼືລະດັບໂລກກໍດີ ມັນກໍພຽງແຕ່ທີ່ນັ້ນແຫຼະ: ເລື້ອງລາວທີ່ພວກເຮົາໄດ້ເຫັນຫຼືໄດ້ອ່ານໃນຂ່າວຕ່າງໆ. ມັນອາດຈະເປັນປະສົບການອັນດຽວ-ໃນຊີວິດ, ແຕ່ວ່າໃນບາງກໍລະນີແປກໆ ພວກເຮົາອາດຈະເວົ້າໄດ້ວ່າ “ຂ້ອຍຢູ່ທີ່ນັ້ນ!”

ແນ່ນອນ, ບໍ່ມີຜູ້ໃດໃນພວກເຮົາໄດ້ຢູ່ທີ່ນັ້ນທີ່ເຫດການອັນມີພະລັງທີ່ໄດ້ປ່ຽນແປງທຸກສິ່ງຢ່າງ-ການຄືນພຣະຊົນຂອງອົງພຣະເຢຊູຄຣິດ- ແຕ່ວ່າພວກເຮົາສະເຫຼີມສະຫຼອງມັນຢ່າງມ່ວນຊື່ນທຸກໆລະດູໃບໄມ້ປົ່ງ. ແຕ່ວ່າພວກເຮົາໄດ້ອ້າແຂນຮັບເອົາການຄືນພຣະຊົນໃນຖານະທີ່ເປັນເຫດການແທ້ຈິງຂອງປະຫວັດສາດ ຫຼືນັບຖືແບບທຳມະດາວ່າມັນເປັນພຽງນິທານພື້ນເມືອງຝ່າຍຈິດວິນຍານ? ຫຼາຍໆຄົນນິຍົມທັສນະທີສອງ. ຄົນອື່ນໆອີກເຫັນວ່າການຄືນພຣະຊົນແມ່ນ “ເລື້ອງບັນດົນໃຈ” ກ່ຽວກັບຄຣູສອນຜູ້ຍິ່ງໃຫຍ່ທີ່ມີຊື່ວ່າເຢຊູ, ແຕ່ວ່າພວກເຂົາບໍ່ໄດ້ເຊື່ອວ່າພຣະອົງເປັນພຣະເມຊີອາຕົວຈິງຜູ້ຊຶ່ງໄດ້ຄືນພຣະຊົນແທນມະນຸສໂລກທຸກໆຄົນ. ພຣະເຢຊູກໍເປັນແຕ່ພຽງບາງຄົນທີ່ຄົນບໍ່ມີສະຕິປັນຍາຄວາມຮູ້ເຄີຍໄດ້ພາກັນເຊື່ອໃນພຣະອົງ.

ອັກຄະສາວົກໂປໂລໄດ້ມີບາງຢ່າງທີ່ຈະເວົ້າກ່ຽວກັບເລື້ອງນັ້ນ! ໃນ 1 ໂກຣິນໂທ 15, ທ່ານໂປໂລໄດ້ອ້າງຄວາມຈິງທີ່ບໍ່ເອົາຄວາມຄິດສ່ວນຕົວເຂົ້າມາປົນ: ພຣະເຢຊູໄດ້ຟື້ນຄືນມາຈາກຄວາມຕາຍຝ່າຍເນື້ອໜັງຮ່າງກາຍ, ແລະຫຼາຍໆຄົນກໍສາມາດຢັ້ງຢືນໄດ້. ພວກເຂົາສາມາດເວົ້າໄດ້ວ່າ “ຂ້ອຍຢູ່ທີ່ນັ້ນ!”

ຂະນະທີ່ພຣະຄຣິດໄດ້ຟື້ນຄືນມາຈາກຕາຍຢ່າງແທ້ຈິງແລ້ວ, ການຄືນພຣະຊົນຂອງພຣະອົງໄດ້ເປັນສາເຫດທີ່ສົ່ງຜົນສະທ້ອນອັນໃຫຍ່ຫຼວງສຳລັບມະນຸດຊາດ.

**ພຣະຄັມພີກ່າວວ່າຢ່າງໃດ? (ຈົ່ງເບິ່ງຕາມຂໍ້ 1, 2, 3 )**

**<u>ການສຶກສາພຣະຄັມພີ</u>**

### 1. 1 ໂກຣິນໂທ 15:1-3

1. *ພີ່ນ້ອງທັງຫຼາຍເອີຍ, ເຮົາຂໍແຈ້ງໃຫ້ເຈົ້າທັງຫຼາຍຄຳນຶງເຖິງຂ່າວປະເສີດທີ່ເຮົາໄດ້ປະກາດແກ່ພວກເຈົ້າແລ້ວ ຊຶ່ງພວກເຈົ້າໄດ້ຍອມຮັບເອົາໄວ້ແລະຕັ້ງຢູ່ໃນຂ່າວປະເສີດນັ້ນ. 2. ແລະຊຶ່ງເປັນເຫດທີ່ກຳລັງໃຫ້ເຈົ້າທັງຫຼາຍໄດ້ພົ້ນຖ້າພວກເຈົ້າຍັງຍຶດຖືຂໍ້ຄວາມທີ່ເຮົາໄດ້ປະກາດເປັນຂ່າວປະເສີດແກ່ພວກເຈົ້ານັ້ນ ເວັ້ນເສັຽແຕ່ພວກເຈົ້າຫາກເຊື່ອຢ່າງບໍ່ຈິງໃຈ. 3. ເຣື່ອງທີ່ເຮົາໄດ້ຮັບໄວ້ແລ້ວນັ້ນ ເຮົາໄດ້ມອບໄວ້ແກ່ເຈົ້າທັງຫຼາຍເປັນເຣື່ອງສຳຄັນທີ່ສຸດຄືວ່າ ພຣະຄຣິດຊົງວາຍພຣະຊົນແທນຄວາມຜິດບາບຂອງເຮົາທັງຫຼາຍຕາມທີ່ຂຽນໄວ້ໃນພຣະຄັມພີ.*

ທ່ານໂປໂລກຳລັງໄດ້ໂຕ້ຖຽງກັບພວກທີ່ເຊື່ອແບບປະເພນີທີ່ໄດ້ກົດດັນຄຣິສຕຽນບາງຄົນໃນເມືອງໂກຣິນໂທ. ມັນກໍເປັນອັນນຶ່ງທີ່ຄ້າຍຄືກັບພວກເຮົາໃນປັດຈຸບັນນີ້: ບໍ່ມີມະນຸດຄົນໃດທີ່ຄືນຂຶ້ນມາຈາກຕາຍໄດ້ດອກ. ດັ່ງນັ້ນ, ທ່ານໂປໂລຈຶ່ງໄດ້ເລີ້ມພາກສ່ວນນີ້ຂອງການຄືນພຣະຊົນກັບຄຳເຕືອນສະຕິອັນກະຈ່າງແຈ້ງຂອງເຣື່ອງຄວາມຕາຍ, ການຖືກຝັງໄວ້, ແລະການຄືນພຣະຊົນຂອງພຣະເຢຊູແລະໝາກຜົນອັນສຳຄັນສຳລັບກິຈການຂອງການໄຖ່ບາບ.

| ແມ່ນຫຍັງທີ່ເຮັດໃຫ້ການຕາຍຂອງພຣະເຢຊູຍິ່ງໃຫຍ່ພິເສດ? |
|---|

ທ່ານໂປໂລໄດ້ກ່າວວ່າສິ່ງທຳອິດທີ່ທ່ານໄດ້ຮັບມານັ້ນທ່ານກໍໄດ້ສົ່ງຕໍ່ໃຫ້ພວກທີ່ເຊື່ອຊາວໂກຣິນໂທ. ຂໍ້ 3-5 ແມ່ນຖືໄດ້ວ່າເປັນຫຼັກຄວາມເຊື່ອທີ່ປະກອບເຂົ້າກັນລະຫວ່າງການຄືນພຣະຊົນຂອງພຣະເຢຊູແລະຕອນທີ່ການຂຽນຈົດໝາຍສະບັບຕົ້ນຂອງທ່ານໂປໂລເຖິງຊາວເມືອງໂກຣິນໂທ. ຈົດໝາຍສະບັບນີ້ລົງວັນທີ່ ປະມານປີທີ່ 55 ຫຼັງ ຄ.ສ., ຊຶ່ງມັນຕົກຖືກຊ່ວງພາຍໃນຊາວຫ້າປີຫຼັງຈາກການຕາຍຂອງພຣະເຢຊູ. ການທີ່ຮູ້ຈັກຊ່ວງເວລາຂອງທັງສອງຂອງຈົດໝາຍສະບັບນີ້ແລະເວລາຂອງຫຼັກຄວາມເຊື່ອທຳອິດກຳເນີດຂຶ້ນທີ່ສຳຄັນຕໍ່ພວກເຮົາໃນປັດຈຸບັນນີ້ເພາະວ່າມັນສະແດງໃຫ້ເຫັນວ່າແມ້ກະທັ້ງການລາຍງານເບື້ອງຕົ້ນກ່ຽວເຣື່ອງພຣະເຢຊູຊຶ່ງລວມທັງສ່ວນປະກອບສາມຢ່າງຂອງເຣື່ອງຂ່າວປະເສີດ; ພວກມັນບໍ່ແມ່ນເອກະສານປອມທີ່ແຕ່ງຂຶ້ນໂດຍຄຣິສຕຽນຕອນຫຼັງໆຕໍ່ມາ. ໃນຂໍ້ທີ່ 3 ທ່ານໂປໂລຕັ້ງຂໍ້ຢືນຢັນຂອງທ່ານໂດຍການປະກາດວ່າ "ພຣະຄຣິດໄດ້ສິ້ນພຣະຊົນແທນຄວາມຜິດບາບຂອງພວກເຮົາອ້າງຕາມພຣະຄັມພີ." ທ່ານໂປໂລຄິດເຖິງປະໂຫຍກຢູ່ໃນພຣະຄັມພີເດີມກ່ຽວເຣື່ອງຄວາມຕາຍຂອງພຣະເມຊີອາ, ດັ່ງເຊັ່ນ "ການທົນທຸກທໍຣະມານຂອງຜູ້ຮັບໃຊ້" ໃນພຣະຄຳເອຊາຢາ 53:5-9 ແລະຄຳບັນລະຍາຍເຖິງການສຽບແທງທີ່ມືແລະຕີນໃນເພງສັດເສີນ 22:16. ທ່ານໂປໂລເລັງການຕາຍຂອງພຣະເຢຊູກັບໄປຫາຄຳທຳນວາຍໃນພຣະຄັມພີເດີມທີ່ກ່ຽວເຣື່ອງພຣະເມຊີອາ. ທ່ານໂປໂລໄດ້ເນັ້ນໜັກທີ່ມັນສຳຄັນຫຼາຍສຳລັບພຣະຄຣິດທີ່ຈະເຮັດໃຫ້ຕຳແໜ່ງຂອງພຣະເມຊີອາໃຫ້ຄົບເຕັມໃນການໄຖ່ບາບຂອງໂລກ. ເຖິງປານນັ້ນ, ສຳລັບການໄຖ່ບາບທີ່ເປັນເຄື່ອງບູຊາຂອງພຣະເຢຊູກໍເປັນບັນຫາ, ຄືພຣະເຢຊູຈຳເປັນຕ້ອງເສັຍຊີວິດແທ້ຈິງ.

ພວກຕໍ່ຕ້ານຂອງພຣະເຢຊູບາງຄັ້ງກໍປະຕິເສດວ່າພຣະອົງບໍ່ໄດ້ເປັນຄົນແທ້ໆເລີຍ, ຕ້ອງປ່ອຍໃຫ້ຕາຍຢ່າງດຽວ. ແຕ່ວ່າ, ມີຫຼັກຖານຫຼວງຫຼາຍຢັ້ງຢືນຕໍ່ປະຫວັດທຳມະຊາດຂອງການຕາຍຂອງພຣະເຢຊູເພື່ອລົບລ້າງພຣະເຢຊູແລະການອ້າງວ່າພຣະອົງບໍ່ແມ່ນຄົນແທ້. ການບັນທຶກຂ່າວປະເສີດ, ລວມທັງນັກບັນທຶກບາງຄົນໃນພາກພຣະສັນຍາໃໝ່, ໄດ້ເປັນພະຍານຕໍ່ຄວາມຈິງຂອງການຕາຍຂອງພຣະເຢຊູ.

## 2. 1 ໂກຣິນໂທ 15:4

*4. ແລະຊົງຖືກວາງໄວ້ ແລ້ວວັນຖ້ວນສາມໄດ້ຖືກຊົງບັນດານໃຫ້ຄືນຂຶ້ນມາ ຕາມທີ່ຂຽນໄວ້ໃນພຣະຄັມພີນັ້ນ.*

ພວກເຮົາບໍ່ສາມາດເວົ້າເກີນຄວາມຍິ່ງໃຫຍ່ຂອງການຄືນພຣະຊົນແລະທຳມະຊາດຂອງປະຫວັດສາດ; ມັນເປັນພື້ນຖານອັນຕົ້ນຕໍຂອງຄວາມເຊື່ອຊາວຄຣິສຕຽນຊຶ່ງຂຶ້ນຢູ່ກັບແລະມີຄວາມຫວັງໃນການຄືນພຣະຊົນຂອງພຣະເຢຊູ. ດັ່ງນັ້ນທ່ານໂປໂລໄດ້ສືບຕໍ່ກັບຫຼັກຄວາມເຊື່ອໃນພຣະຄຳຂໍ້ນີ້ທີ່ເຜີຍແບພື້ນຖານຂອງຂ່າວປະເສີດ: ບໍ່ພຽງແຕ່ພຣະຄຣິດໄດ້ສິ້ນພຣະຊົນສຳລັບຄວາມຜິດບາບຂອງພວກເຮົາ, ແຕ່ວ່າຫຼາຍໄປກວ່ານັ້ນອີກ, ພຣະອົງໄດ້ຖືກຝັງແລະໄດ້ຟື້ນຄືນມາອີກ. ໃນນັ້ນມັນມີຄວາມພິເສດແລະສຳຄັນຂອງຂ່າວປະເສີດ.

| ເປັນຫຍັງການຄືນພຣະຊົນຈຶ່ງເປັນປັດໃຈສຳຄັນຂອງຂ່າວປະເສີດ? |
|---|

ພຣະເຢຊູໄດ້ເຂົ້າມາໃນໂລກໃນຖານະເປັນມະນຸດແລະໄດ້ໃຊ້ໜີ້ບາບກັມຂອງມວນມະນຸດຢ່າງເຕັມໃຈ; ຄວາມຕາຍ (ໂຣມ 6:23). ພຣະອົງບໍ່ໄດ້ຕາຍຍ້ອນຄວາມບາບຂອງພຣະອົງເອງ-ພຣະອົງບໍ່ມີບາບ 2 ໂກຣິນໂທ 5:21)-ພຣະອົງໄດ້ຕາຍເພື່ອຄວາມຜິດບາບຂອງພວກເຮົາ. ພຣະອົງໄດ້ຕາຍໃນຖານະເປັນຜົນຈາກການຕາຍທີ່ໜ້າສະຫຍົດສະຫຍອງຂອງການທີ່ຖືກຄຶງໄວ້ທີ່ໄມ້ກາງແຂນ, ແຕ່ວ່າຮ່າງກາຍຂອງພຣະອົງບໍ່ໄດ້ເປື່ອຍເໜົ່າ (ກຈກ 2:31). ແທ້ໆແລ້ວ, ຂະນະທີ່ທ່ານໂປໂລໄດ້ບັນລະຍາຍຕໍ່ຊາວເມືອງໂກຣິນໂທ, ພຣະເຢຊູໄດ້ຟື້ນຄືນມາທັງຝ່າຍເນື້ອໜັງຮ່າງກາຍໃນວັນຖ້ວນສາມ. ຫຼັກຄວາມເຊື່ອຕົ້ນຕໍນີ້ອາດຈະເລັງເຖິງເພງສັດເສີນ 16:10, ຄຳທຳນວາຍກ່ຽວກັບພຣະເມຊີອາທີ່ກະສັດດາວິດໄດ້ປະກາດວ່າ "ຜູ້ສັດຊື່" ຂອງພຣະເຈົ້າຈະບໍ່ພົບຄວາມເປື່ອຍເໜົ່າ.

ພຣະເຢຊູໄດ້ຖືກວາງໄວ້ທີ່ອຸບມຸງ, ເພາະວ່າພຣະອົງເປັນມະນຸດແທ້ມີເນື້ອໜັງຮ່າງກາຍຄືກັບມະນຸດທົ່ວໆໄປ. ພຣະອົງບໍ່ແມ່ນວິນຍານທີ່ເລື່ອນລອຍຫຼືເທບນິຍາຍຫຼືເຄິ່ງຄົນເຄິ່ງພຣະເຈົ້າ. ພຣະອົງເປັນມະນຸດຢ່າງເຕັມສ່ວນແລະເປັນພຣະເຈົ້າຢ່າງເຕັມສ່ວນ, ທີ່ໃຫ້ພຣະອົງພໍສຳລັບເຮັດໃຫ້ໄດ້ທີ່ຈະຍອມວາງຊີວິດພຣະອົງເອງລົງແລະມີສິດທີ່ຈະຮັບມັນຄືນມາອີກ (ຢຮ 10:18). ການຖືກຝັງຂອງພຣະເຢຊູ-ຂໍ້ມູນທີ່ພຣະອົງຖືກປິງໄວ້ໃນອຸບມຸງແທ້ຈິງ-ເຕືອນພວກເຮົາວ່າພຣະອົງຊົງເປັນມະນຸດແທ້ຈິງ.

ການຕາຍແລະການຖືກຝັງຂອງພຣະເຢຊູກໍເຕືອນພວກເຮົາວ່າຄວາມບາບມີຜົນຕອບແທນ. ຄວາມຕາຍຂອງພຣະອົງຕັ້ງຢູ່ຢ່າງຊັດເຈນຊຶ່ງທຽບກັບການເປັນຢູ່ຂອງສັງຄົມພວກເຮົາປັດຈຸບັນທີ່ມີຄວາມໝາຍໃໝ່ຂອງຄວາມດີແລະຄວາມຊົ່ວທີ່ຂຶ້ນກັບສ່ວນບຸກຄົນຈະຍຶດຖືເອົາວ່າອັນໃດເປັນຄວາມຈິງ. ໂດຍຜ່ານຄວາມຕາຍຂອງພຣະເຢຊູ, ແຕ່ວ່າ, ພວກເຮົາໄດ້ເຫັນຄວາມດີແລະຄວາມຊົ່ວມີຜົນຕອບສະໜອງແລະກໍບໍ່ມີຜູ້ໃດຫຼີກພົ້ນກຳຂອງຄວາມຊົ່ວໃນໂລກນີ້. ໃນຂະນະທີ່ຜົນຂອງຄວາມບາບມະນຸດນີ້, ພວກເຮົາທຸກຄົນຈະຕ້ອງຕາຍ.

ເຖິງປານນັ້ນ, ພຣະເຢຊູ, ກໍເປັນເຄື່ອງຖວາຍໄຖ່ຄວາມຜິດບາບຂອງພວກເຮົາ, ພຣະອົງຜູ້ທີ່ໄດ້ຮັບເອົາຄວາມຕາຍເອງ, ແຕ່ບໍໄດ້ຕັ້ງຢູ່ກັບຄວາມຕາຍ. ພຣະເຢຊູໄດ້ປະທານທາງດຽວເທົ່ານັ້ນໃນການເອົາຊະນະຄວາມຕາຍໃນປະຫວັດສາດ: ການຄືນພຣະຊົນອັນແທ້ຈິງ. ຈົ່ງພິຈາລະນາກ່ຽວກັບສິ່ງນີ້: ຖ້າທ່ານຢາກປົ້ນກັບຕໍ່ຄວາມຕາຍ, ທ່ານຈະຕ້ອງເຮັດແນວໃດ? ທ່ານຕ້ອງເອົາຊະນະມັນດ້ວຍຊີວິດ. ການຄືນພຣະຊົນຂອງພຣະເຢຊູແມ່ນເຫດການປະຫວັດສາດອັນຊຶ່ງຣິດອຳນາດຂອງພຣະເຈົ້າໄດ້ປົ້ນກັບຕໍ່ຄວາມຕາຍ.

ພວກຕໍ່ຕ້ານອາດຈະເວົ້າວ່າການຄືນພຣະຊົນເປັນສຽງເໝືອນກັບວ່ານິຍາຍປອບໃຈແກ່ພວກທີ່ຢ້ານຕາຍ. ແຕ່ວ່າທ່ານໂປໂລຈະບໍ່ໄດ້ຮ້ອງມັນວ່ານິຍາຍຢ່າງແນ່ນອນ. ມັນໄກກັນເຫຼືອເກີນ. ທ່ານໄດ້ຂຽນໜ້ອຍນຶ່ງຫຼັງຈາກຂໍ້ພຣະຄຳເຫຼົ່ານີ້ວ່າຖ້າພຣະເຢຊູບໍ່ໄດ້ຟື້ນຄືນມາຈາກຄວາມຕາຍແລ້ວຄວາມເຊື່ອຂອງພວກເຮົາກໍໄຮ້ຜົນ (1 ກຣທ 15:14,17). ການບັນຍາຍຂອງທ່ານຂອງສະຖານະການນີ້ບໍ່ແມ່ນສິ່ງສຳລັບນິຍາຍ, ແຕ່ເປັນຂອງການບໍ່ມີຄວາມຫວັງຕ່າງຫາກ.

## 3. 1 ໂກຣິນໂທ 15:5-8

*5. ພຣະອົງຊົງປາກົດແກ່ເກຟາ ແລ້ວແກ່ພວກສິບສອງຄົນນັ້ນ. 6. ຕໍ່ມາພຣະອົງໄດ້ຊົງປາກົດແກ່ພວກພີ່ນ້ອງກວ່າຫ້າຮ້ອຍຄົນໃນຄາວດຽວ ຊຶ່ງສ່ວນຫຼາຍຍັງເປັນຢູ່ຈົນເຖິງທຸກວັນນີ້ ແຕ່ບາງຄົນກໍລ່ວງຫຼັບໄປແລ້ວ. 7. ຕໍ່ນັ້ນອີກພຣະອົງໄດ້ຊົງປາກົດແກ່ຢາໂກໂບ ແລ້ວແກ່ອັຄສາວົກທັງໝົດ. 8. ພາຍຫຼັງທີ່ສຸດພຣະອົງໄດ້ຊົງປາກົດແກ່ເຮົາ ຜູ້ເປັນເໝືອນລູກທີ່ເກີດຜິດຍາມ.*

ທ່ານໂປໂລໄດ້ເວົ້າສືບຕໍ່ຂອງການໃຫ້ເຫດຜົນໂດຍການບັນລະຍາຍທີ່ພຣະເຢຊູໄດ້ປາກົດແກ່ຫຼາຍໆຄົນຫຼັງຈາກການຄືນພຣະຊົນຂອງພຣະອົງ. ການໂຕ້ຖຽງອັນນີ້ມັນບໍ່ເຂົ້າເຣື່ອງຖ້າວ່າຮ່າງກາຍຂອງພຣະເຢຊູຍັງຢູ່ໃນອຸບມຸງຢູ່, ນັກສາສນາສາດສ່ວນໃຫຍ່ແລ້ວກໍເຫັນພ້ອມວ່າຫຼັກຖານທັງໝົດຈາກສັດຕະວັດທີ່ນຶ່ງຊີ້ໄປທີ່ອຸບມຸງຫວ່າງເປົ່ານັ້ນ. ຄວາມຈິງແລ້ວ, ຕຳລາເກົ່າແກ່ກໍບໍ່ໄດ້ບັນທຶກເຫດການໃດໆເພີ້ມເຕີມວ່າມີຫຍັງເກີດຂຶ້ນຕໍ່ພຣະເຢຊູຫຼັງຈາກການຖືກຄຶງໄວ້ທີ່ໄມ້ກາງແຂນຂອງພຣະອົງ.

ມີຫຼາຍໆເຫດການຈາກພວກຄົນທີ່ແຕກຕ່າງກັນໄດ້ລາຍງານເຖິງການໄດ້ເຫັນພຣະຄຣິດທີ່ໄດ້ຟື້ນຄືນມາແລ້ວນັ້ນໃນຫຼາຍໆແຫ່ງ. ທ່ານໂປໂລໄດ້ລາຍງານວ່າພຣະເຢຊູໄດ້ປາກົດຕໍ່ສາວົກຄົນນຶ່ງຫຼືຫຼາຍກວ່ານັ້ນຢ່າງໜ້ອຍສອງເທື່ອ, ແລະຕໍ່ຈາກນັ້ນມາກໍປາກົດຕໍ່ຄົນເປັນກຸ່ມກວ່າຫ້າຮ້ອຍຄົນ. ທ່ານໂປໂລໄດ້ກ່າວຕາມຄວາມເປັນຈິງ, ແລະຖ້າຜູ້ໃດມີຄຳຖາມຂອງຄວາມເປັນຈິງໃນສິ່ງທີ່ລາວໄດ້ເວົ້າ, ພວກເຂົາກໍຄວນຈະຖາມພວກຄົນເຫຼົ່ານັ້ນດ້ວຍຕົວເຂົາເອງ, ຂະນະທີ່ "ພວກເຂົາສ່ວນຫຼາຍຍັງມີຊີວິດຢູ່" (ຂໍ້ 6).

| ແມ່ນຫຍັງຄືຄວາມສຳຄັນຂອງຄຳພະຍານຂອງພວກທີ່ເປັນພະຍານ? |
| --- |

ພວກເຫຼົ່າສາວົກກໍບໍ່ໄດ້ຫຍັງເພີ້ມເຕີມຈາກການປັ້ນເຣື່ອງຂອງການຄືນພຣະຊົນ. ຄວາມຈິງແລ້ວ, ສິ່ງທີ່ກົງກັນຂ້າມເກີດຂຶ້ນ: ສາວົກທັງໝົດຍົກເວັ້ນທ່ານໂຢຮັນໄດ້ຖືກຂ້າເພາະວ່າການປະກາດຂອງພວກເຂົາເຈົ້າເຖິງການຟື້ນຄືນມາຂອງພຣະເມຊີອາຜູ້ທີ່ໄດ້ປາກົດຕໍ່ພວກເຂົາເຈົ້າ. ແຕ່ລະຄົນຂອງພວກເຂົາຕ່າງກໍອອກຈາກຄວາມຢ້ານກົວໃນການລີ້ຊ່ອນຕົວຫຼັງຈາກການຖືກຄຶງທີ່ໄມ້ກາງແຂນຂອງພຣະເຢຊູມາເປັນຜູ້ປະກາດທີ່ກ້າຫານຂອງຂ່າວປະເສີດເຣື່ອງການຄືນພຣະຊົນແລະຄວາມລອດພົ້ນໃນພຣະຄຣິດ.

ຢ່າໃຫ້ພວກເຮົາລືມທ່ານໂປໂລ-ຊຶ່ງມີຊື່ເກົ່າວ່າໂຊໂລໄທເມືອງຕາໂຊ, ຟາລີຊາຍຂອງຄົນຟາລີຊາຍ-ຜູ້ທີ່ກຳລັງປະຊາສັມພັນຂໍ້ມູນອັນນີ້ໃຫ້ແກ່ຊາວຄຣິສຕຽນເມືອງໂກຣິນໂທ. ໂຊໂລກໍແມ່ນຜູ້ນຶ່ງທີ່ກົດຂີ່ຂົ່ມເຫັງຄຣິສຕະຈັກຢ່າງບໍ່ຢຸດຢັ້ງແລະໄດ້ຍອມປ່ອຍຄຸ້ມເຂດທັງໝົດແລະຕຳແໜ່ງຂອງຕົນເພື່ອໄປປະກາດເຣື່ອງພຣະເຢຊູໃຫ້ແກ່ພວກຄົນຕ່າງຊາດ. ໃນຖານະເຄີຍເປັນຄົນຟາລີຊາຍມາກ່ອນ, ທ່ານໂປໂລກໍໄດ້ເປັນພາກສ່ວນຂອງກຸ່ມຄົນທີ່ມີການສຶກສາສູງ. ທ່ານໄດ້ຮູ້ຈັກການໃຊ້ເຫດຜົນແລະຍັງສາມາດສເນີຄະດີຂອງທ່ານຢ່າງຊຳນານຕໍ່ພວກຜູ້ຊົມແຕ່ລະກຸ່ມຂອງທ່ານໄດ້. ທ່ານບໍ່ໄດ້ກັບໃຈຢ່າງງ່າຍດາຍ. ເຖິງປານນັ້ນ, ທ່ານໄດ້ຍ້າຍຈາກການຂົ່ມເຫັງຄຣິສຕຽນມາເຂົ້າຮ່ວມຊັ້ນອັນສຳຄັນຂອງພວກເຂົາໃນຖານະເປັນຜູ້ເຜີຍແຜ່ຄຳສັ່ງສອນເພື່ອພຣະຄຣິດ. ແລະສິ່ງທັງໝົດທີ່ໄດ້ເກີດຂຶ້ນກໍເພາະວ່າທ່ານໄດ້ເຫັນພຣະຄຣິດທີ່ໄດ້ຄືນພຣະຊົນແລ້ວ (ກຈກ 9:4-6)!

| ກຸ່ມຂອງພວກເຮົາສາມາດເປັນພະຍານສຳລັບຄົນອື່ນໆຂອງການຄືນພຣະຊົນຂອງພຣະເຢຊູຢ່າງໃດ? |
| --- |

## <u>**ໃຊ້ໃນຊີວິດ:**</u>

ການຄືນພຣະຊົນຂອງພຣະເຢຊູເປັນຄຳຕອບທີ່ແຂງແຮງທີ່ສຸດສຳລັບສິ່ງທີ່ໄດ້ເກີດຂຶ້ນສອງພັນປີທີ່ຜ່ານມາໃນກຸງເຢຣູຊາເລັມ. ທ່ານຈະເຮັດແນວໃດກັບຄວາມຈິງອັນນັ້ນ? ຈົ່ງເລືອກການນຳໃຊ້ອັນນຶ່ງໃນຂ້າງລຸ່ມນີ້.

- **ໄວ້ວາງໃຈ.** ມອບຊີວິດຂອງທ່ານໃຫ້ພຣະຄຣິດທີ່ໄດ້ຄືນພຣະຊົນ." ຄືວ່າຖ້າເຈົ້າຈະຮັບດ້ວຍປາກຂອງເຈົ້າວ່າ, "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ແລະເຊື່ອໃນຈິດໃຈວ່າ ພຣະເຈົ້າໄດ້ຊົງໂຜດບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວເຈົ້າກໍຈະໄດ້ພົ້ນ" (ໂຣມ 10:9).
- **ອ່ານ.** ອ່ານທິສດີໃນທາງອື່ນອີກເພີ້ມເຕີມກ່ຽວກັບການຄືນພຣະຊົນແລະຕອບກັບຕໍ່ທິສດີເຫຼົ່ານັ້ນ.
- ແບ່ງປັນ. ຄິດເຖິງບາງຄົນທີ່ຢາກຮູ້ຈັກຄວາມຈິງຂອງການຄືນພຣະຊົນຂອງພຣະເຢຊູ. ຂຽນຊື່ຄົນນັ້ນລົງແລະອະທິຖານສຳລັບຄົນນັ້ນ. ອະທິຖານເພື່ອໂອກາດສຳລັບການແບ່ງປັນກ່ຽວກັບການຄືນພຣະຊົນຂອງພຣະຄຣິດເຊັ່ນກັນ. ຕ້ອງຕຽມຕົວແລະເຕັມໃຈທີ່ຈະມີສ່ວນເຂົ້າຮ່ວມໃນການສົນທະນາເຖິງຄວາມຈິງທີ່ມີຣິດອຳນາດຂອງການຄືນພຣະຊົນ, ຊຶ່ງເປັນເຫດການທີ່ປ່ຽນແປງທຸກສິ່ງຢ່າງສຳລັບພວກເຮົາ!

ພວກເຮົາທັງໝົດສາມາດຊີ້ໄປທີ່ຊີວິດໄດ້ຖືກປ່ຽນແປງຈາກເຫດການປະຫວັດສາດໃນລະດັບທີ່ແຕກຕ່າງກັນ. ແຕ່ວ່າຄວາມຕາຍ, ການຖືກຝັງໄວ້, ແລະການຄືນພຣະຊົນຂອງພຣະຄຣິດຢືນຢັດຕ່າງຫາກໃນຖານະທີ່ເປັນເຫດການທີ່ໃຫ້ພວກເຮົາມີຄວາມຫວັງໃນປັດຈຸບັນແລະຕລອດໄປເປັນນິດດ້ວຍ!

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA